ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------0000---------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2228 /ອຄ.ກອທ

ນະຄອນຫລວງວຽງຈັນ, ວັນທີ 22 ພະຈິກ 2011

# ແຈ້ງການ

ເຖິງ : ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫລວງ

ເລື່ອງ : ການສືບຕໍ່ດັດສົມ ແລະ ປັບປຸງໂຮງງານປຸງແຕ່ງໄມ້

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17/8/2006.
- ອີງຕາມຄຳສັ່ງເລກທີ 17/ນຍ, ລົງວັນທີ 22/09/2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມຄຳສັ່ງແນະນຳເລກທີ 010/ນຍ, ລົງວັນທີ 02/06/2011 ກ່ຽວກັບການຕ້ານ ແລະ ສະກັດກັ້ນ ການຂຸດຄົ້ນ ແລະ ຊື້-ຂາຍໄມ້ປະເພດຫວງຫ້າມ.

ບົນພື້ນຖານການຖອດຖອນບົດຮຽນ ຈາກການລົງເຄື່ອນໄຫວວຽກງານ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການສືບຕໍ່ດັດສົມ ແລະ ປັບປຸງໂຮງງານປຸງແຕ່ງໄມ້, ການເອື້ອອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ການຜະລິດ ແລະ ການສົ່ງເສີມການຜະລິດເປັນສິນຄ້າ ຢູ່ 7 ແຂວງພາກໃຕ້ (ແຂວງອັດຕະປື, ເຊກອງ, ສາລະວັນ, ຈຳປາສັກ, ສະຫວັນນະເຂດ, ຄຳມ່ວນ ແລະ ບໍລິຄຳໄຊ) ໃນວັນທີ 31/10/2011-7/11/2011 ເພື່ອແນໃສ່ສືບຕໍ່ດັດສົມ ແລະ ປັບປຸງໂຮງງານປຸງແຕ່ງໄມ້ ໃຫ້ກາຍເປັນໂຮງງານທີ່ມີການຍົກລະດັບກຳລັງການຜະລິດ, ເປັນພື້ນຖານເສດຖະກິດ ແລະ ແຫລ່ງລາຍຮັບຂອງແຂວງ ແລະ ນະຄອນຫລວງ, ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ສ້າງວຽກເຮັດງານທຳໃຫ້ແກ່ຄົນລາວ, ຜະລິດຕະພັນມີຍີ່ຫໍ້ ແລະ ສ້າງມູນຄ່າເພີ່ມສູງ, ນຳໃຊ້ວັດຖຸດິບຢ່າງຄຸ້ມຄ່າ ແລະ ເກີດປະໂຫຍດສູງສຸດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫລວງ ສ້າງແຜນການລະອຽດ ໃນການສືບຕໍ່ດັດສົມ ແລະ ປັບປຸງໂຮງງານປຸງແຕ່ງໄມ້ ໂດຍໃຫ້ຄັດເລືອກເອົາໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີຈຳນວນໜຶ່ງ ທີ່ເຫັນວ່າໄດ້ຕາມມາດຕະຖານໂຮງງານ ແລະ ມາດຕະຖານຜະລິດຕະພັນ

ເພື່ອແນໃສ່ສົ່ງເສີມ ແລະ ພັດທະນາໃຫ້ມີຄວາມຍືນຍົງ. ສໍາລັບການຄັດເລືອກ ຈະເອົາຈັກໂຮງງານ, ຄັດເລືອກເອົາໜ້ອຍຫລາຍປານໃດ ແມ່ນໃຫ້ອີງໃສ່ 2 ເງື່ອນໄຂພື້ນຖານ ດັ່ງລຸ່ມນີ້:

ກ. ໃຫ້ອີງໃສ່ຄວາມສາມາດຕອບສະໜອງດ້ານວັດຖຸດິບ (ໄມ້) ໃຫ້ມີຄວາມດຸ່ນດ່ຽງກັບຈໍານວນໂຮງງານດັ່ງກ່າວ (ໂຮງງານທີ່ຄັດເລືອກ) ທີ່ຕ້ອງການສົ່ງເສີມ ແລະ ພັດທະນາ.

ຂ. ໃຫ້ອີງໃສ່ຄຸນລັກສະນະຂອງໂຮງງານ:

- ຕ້ອງເປັນໂຮງງານທີ່ມີການພັດທະນາການຜະລິດ ດ້ວຍການຍົກລະດັບກໍາລັງການຜະລິດ, ຫັນປ່ຽນຈາກການຜະລິດແບບລ້າສະໄໝ ໄປເປັນທັນສະໄໝ ດ້ວຍການນໍາໃຊ້ເຄື່ອງຈັກ ແລະ ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນລະບົບອຸດສາຫະກໍາ, ຜະລິດຕະພັນໄດ້ທັງປະລິມານ ແລະ ຄຸນນະພາບ, ສ້າງມູນຄ່າເພີ່ມສູງ;
- ຕ້ອງຮັບປະກັນຄວາມຍືນຍົງທີ່ຕິດພັນກັບສະຖານທີ່ ແລະ ການຮັກສາສິ່ງແວດລ້ອມ;
- ຕ້ອງນໍາໃຊ້ ແລະ ສ້າງແຮງງານພາຍໃນ (ແຮງງານລາວ) ຕາມກົດໝາຍກໍານົດ;
- ຕ້ອງນໍາໃຊ້ວັດຖຸດິບພາຍໃນ ໃຫ້ກຸ້ມຄ່າ ແລະ ເກີດປະໂຫຍດສູງສຸດ;
- ໂຮງງານດັ່ງກ່າວຕ້ອງເປັນພື້ນຖານເສດຖະກິດຂອງແຂວງ;
- ໂຮງງານດັ່ງກ່າວຕ້ອງເປັນແຫລ່ງລາຍຮັບຂອງແຂວງ;
- ໂຮງງານດັ່ງກ່າວຕ້ອງພັດທະນາຜະລິດຕະພັນໃຫ້ມີຍີ່ຫໍ້;
- ໂຮງງານດັ່ງກ່າວຕ້ອງເຄື່ອນໄຫວຖືກຕ້ອງຕາມລະບຽບການຂອງການລົງທຶນ.

2. ການສ້າງແຜນດັ່ງກ່າວ ແມ່ນໃຫ້ສໍາເລັດພາຍໃນ 1 ເດືອນ ນັບແຕ່ວັນທີ່ເຊັນແຈ້ງການສະບັບນີ້. ໃນການສ້າງແຜນດັ່ງກ່າວນີ້ ໃຫ້ປະສານສົມທົບກັບກົມອຸດສາຫະກໍາ ແລະ ຫັດຖະກໍາ ແລະ ຕ້ອງໃຫ້ໄດ້ຮັບຄວາມເຫັນດີ ແລະ ຮັບຮອງຈາກອໍານາດການປົກຄອງແຂວງ, ນະຄອນຫລວງ (ເຈົ້າແຂວງ, ເຈົ້າຄອງນະຄອນ ຫລື ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ). ແຜນດັ່ງກ່າວ ຈະໄດ້ນໍາສົ່ງ ແລະ ລາຍງານໃຫ້ຄະນະກວດກາລັດຖະບານ ເປັນຜູ້ຕິດຕາມກວດກາການຈັດຕັ້ງປະຕິບັດ.
3. ຫຼັງຈາກແຜນໄດ້ຖືກຮັບຮອງເອົາແລ້ວ ໃຫ້ເລີ່ມຈັດຕັ້ງປະຕິບັດ ແລະ ພາຍໃນໄລຍະເວລາ 6 ເດືອນ (ນັບແຕ່ມື້ຮັບຮອງເອົາແຜນ) ໃຫ້ສາມາດເກີດມີໂຮງງານຕົວແບບຕາມທິດຂອງການດັດສົມຄື: ເປັນໂຮງງານທີ່ມີການຍົກລະດັບກໍາລັງການຜະລິດ, ເປັນພື້ນຖານເສດຖະກິດ ແລະ ແຫລ່ງລາຍຮັບຂອງແຂວງ, ນະຄອນຫລວງ, ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ສ້າງວຽກເຮັດງານທໍາໃຫ້ແກ່ຄົນລາວ, ຜະລິດຕະພັນມີຍີ່ຫໍ້ ແລະ ສ້າງມູນຄ່າເພີ່ມສູງ, ນໍາໃຊ້ວັດຖຸດິບຢ່າງກຸ້ມຄ່າ ແລະ ເກີດປະໂຫຍດສູງສຸດ.
4. ເມື່ອຄັດເລືອກໂຮງງານທີ່ຈະສົ່ງເສີມ ແລະ ກໍານົດແຫລ່ງວັດຖຸດິບ (ໄມ້) ໄດ້ແລ້ວ, ໃຫ້ສະໜອງໄມ້ ໃຫ້ສະເພາະແຕ່ໂຮງງານທີ່ຖືກຄັດເລືອກເທົ່ານັ້ນ. ສ່ວນໂຮງງານປຸງແຕ່ງໄມ້ອື່ນໆ ທີ່ບໍ່ຖືກຄັດເລືອກກໍ່ໃຫ້ເປັນເຄືອຄ່າຍ ຫລື ເປັນຄູ່ຮ່ວມສໍາພັນທາງທຸລະກິດ ກັບໂຮງງານທີ່ຖືກຄັດເລືອກ. ຖ້າໂຮງງານໃດ ຫາກສວຍໂອກາດ, ລັກລອບ, ຈ້າງປະຊາຊົນໃຫ້ລັກລອບ, ບໍ່ພັດທະນາ, ດໍາເນີນທຸລະກິດຜິດລະບຽບການ, ບໍ່ໄດ້ຕາມມາດຕະຖານ ແລະ ບໍ່ມີການປັບປຸງ ກໍ່ສາມາດພິຈາລະນາໃຫ້ຍຸບເລີກ ຫລື ຢຸດ ເຊົາແບບເປີດ (ແບບບໍ່ໄດ້ສັ່ງໃຫ້ຍຸບເລີກ), ແຕ່ບໍ່ອະນຸຍາດແບ່ງໂຄຕາໄມ້ໃຫ້. ຖ້າຫາກວ່າມີໄມ້ມາຜະລິດ ສະແດງວ່າໄມ້ບໍ່ຖືກລະບຽບ.
5. ໃຫ້ແຕ່ລະແຂວງ ແລະ ນະຄອນຫລວງ ກວດກາຄືນບັນດາໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີທັງໝົດ ພາຍໃນແຂວງຂອງຕົນ ແລ້ວໃຫ້ຈັດເປັນປະເພດຄື: ປະເພດດີ ມີຈັກໂຮງງານ, ປະເພດກາງ ມີຈັກໂຮງງານ ແລະ ປະເພດອ່ອນ ມີຈັກໂຮງງານ ໂດຍອີງຕາມລະບຽບການທີ່ເຮົາປະຕິບັດຜ່ານມາ

ເຊັ່ນ: ຂໍ້ຕົກລົງວ່າດ້ວຍ ມາດຕະຖານໂຮງງານອຸດສາຫະກໍາປຸງແຕ່ງໄມ້ ສະບັບເລກທີ 0719/ອຄ, ລົງວັນທີ 03/04/2009 ແລະ ຂໍ້ຕົກລົງວ່າດ້ວຍ ຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ ສະບັບເລກທີ 1415/ອຄ.ກອກ, ລົງວັນທີ 28/8/2008 ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

6. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ແລະ ນະຄອນຫລວງ ເກັບກໍາຄືນ ແລະ ໃຫ້ຮີບຮ້ອນປັບປຸງແກ້ໄຂ ບັນດາໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ທີ່ໃຫ້ຄົນຕ່າງປະເທດເຊົ່າທະບຽນວິສາຫະກິດ ແລະ ເຊົ່າໄປດໍາເນີນການຜະລິດ (ເຊົ່າໂຮງງານ) ແບບບໍ່ຖືກຕ້ອງ ເນື່ອງຈາກວ່າ ຈະເປັນການສວຍໂອກາດໃຫ້ປະຊາຊົນລັກໄມ້ໄປຂາຍໃຫ້, ຖ້າເປັນໄປໄດ້ກໍ່ຄວນພິຈາລະນາໃຫ້ຢຸດເຊົາ. ຖ້າຈະລົງທຶນຮ່ວມລະຫວ່າງລາວ ແລະ ຕ່າງປະເທດ ກໍ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

7. ໃຫ້ບັນດາໂຮງງານປຸງແຕ່ງໄມ້ທຸກປະເພດ, ທຸກຂະໜາດ ທີ່ມີຈຸດປະສົງ ສົ່ງອອກຜະລິດຕະພັນໄມ້ ແມ່ນໃຫ້ຜະລິດເປັນຜະລິດຕະພັນສໍາເລັດຮູບ, ບໍ່ໃຫ້ສົ່ງອອກໄມ້ທ່ອນ, ໄມ້ຕີຕັບ, ໄມ້ເລື່ອຍ, ໄມ້ຊອຍ ແລະ ຜະລິດຕະພັນໄມ້ເຄິ່ງສໍາເລັດຮູບທຸກຊະນິດ.

8. ກ່ຽວກັບລາຄາຂາຍໄມ້ ໃຫ້ເອົາຕາມລາຄາທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ກໍານົດອອກ ເພື່ອເປັນການສົ່ງເສີມການຜະລິດຢູ່ພາຍໃນປະເທດ, ແຕ່ຫາກບໍ່ແມ່ນເພື່ອສົ່ງອອກເປັນວັດຖຸດິບ.

9. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ແລະ ນະຄອນຫລວງ ສົມທົບກັບຂະແໜງກະສິກໍາ ແລະ ປ່າໄມ້ ກວດກາເບິ່ງແຫຼ່ງວັດຖຸດິບ (ໄມ້) ໃນແຂວງ ແລະ ນະຄອນຫລວງ ມີເທົ່າໃດ? ສາມາດຕອບສະໜອງໃຫ້ແກ່ໂຮງງານອຸດສາຫະກໍາປຸງແຕ່ງໄມ້ໄດ້ຫຼາຍປານໃດ?

10. ມອບໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ ຕິດຕາມ ແລະ ປະສານງານ ກັບບັນດາແຂວງ ແລະ ນະຄອນຫລວງ ໃນການສືບຕໍ່ຄັດເລືອກ ແລະ ປັບປຸງໂຮງງານປຸງແຕ່ງໄມ້ ໂດຍສະເພາະແມ່ນການສ້າງແຜນໃຫ້ສໍາເລັດຕາມຄາດໝາຍທີ່ກໍານົດໄວ້.

11. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກໍາ ແລະ ການຄ້າ

ດຣ. ນາມ ວິຍະເກດ

ບ່ອນສົ່ງ:

- ຄະນະນໍາກະຊວງ ອຄ ເພື່ອຊາບ
- ອົງການກວດກາລັດຖະບານ ເພື່ອຊາບ
- ບັນດາກົມອ້ອມຂ້າງກະຊວງ ອຄ ເພື່ອຊາບ
- ຫ້ອງວ່າການແຂວງ, ນະຄອນຫລວງ ເພື່ອຊາບ
- ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫລວງ ເພື່ອຊາບ
- ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫລວງ ເພື່ອປະຕິບັດ
- ກົມອຸດສາຫະກໍາ ແລະ ຫັດຖະກໍາ ເພື່ອປະຕິບັດ